**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ /ລບ

ນະຄອນຫຼວງວຽງຈັນ, ວັນທີ

# (ຮ່າງ) ດຳລັດ
# ວ່າດ້ວຍ ສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ....../ອຄ, ລົງວັນທີ......2024.

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ແລະ ນະໂຍບາຍ ກ່ຽວກັບ ວຽກງານ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ເຮັດໃຫ້ວຽກງານດັ່ງກ່າວ ເຄື່ອນໄຫວມີປະສິດທິພາບ ແລະ ປະສິດທິຜົນ ແນ່ໃສ່ສົ່ງເສີມ, ພັດທະນາ ສິນຄ້າໜຶ່ງເມືອງ ໜຶ່ງຜະລິດຕະພັນ ໃຫ້ເຕີບໃຫຍ່ເຂັ້ມແຂງ, ປົກປັກຮັກສາສີໄມ້ລາຍມື, ຄວາມເປັນເອກະລັກໂດດເດັ່ນຂອງສິນຄ້າ, ສົ່ງເສີມຂະ ບວນການຜະລິດສິນຄ້າໃຫ້ມີຄວາມຟົດຟື້ນ, ມີຄວາມຫຼາກຫຼາຍ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຜະລິດ, ຜູ້ຊົມໃຊ້, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມຂອງຊາດ ແລະ ທ້ອງຖິ່ນ.

### ມາດຕາ 2 ສິນຄ້າ ໜຶ່ງເມືອງ ໜຶ່ງງຜະລິດຕະພັນ

ສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ຂຽນຫຍໍ້ເປັນພາສາລາວ “**ໂອດອບ**”, ຂຽນເປັນພາສາສາກົນ “One District One Product” ຂຽນຫຍໍ້ເປັນພາສາສາກົນ “ODOP” ແມ່ນຜະລິດຕະພັນທີ່ນຳໃຊ້ສີມືແຮງ ງານ, ພູມປັນຍາ, ຫົວຄິດປະດິດສ້າງ ແລະ ຊັບພະຍາກອນພາຍໃນທ້ອງຖິ່ນ ທີ່ເປັນເອກະລັກຂອງທ້ອງຖິ່ນນັ້ນ ເຂົ້າໃນການຜະລິດ, ຊຶ່ງປະກອບມີໂອດອບໃນຮູບແບບສິນຄ້າ ແລະ ໂອດອບໃນຮູບແບບບໍລິການ ທີ່ມີມູນເຊື້ອ ແລະ ເປັນມໍລະດົກຕົກທອດກັນມາ ໂດຍຖືເປັນຊັບສິນທາງປັນຍາຂອງຜູ້ຜະລິດຄິດແຕ່ງ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າ** ໝາຍເຖິງຜະລິດຕະພັນຂອງແຮງງານ ທີ່ນຳມາແລກປ່ຽນ - ຊື້ຂາຍ, ຊຶ່ງໂອດອບຈະມີຜະລິດ ຕະພັນໃນຮູບແບບສິນຄ້າ ແລະ ຜະລິດຕະພັນໃນຮູບແບບບໍລິການ;

2. **ສິນຄ້າໂອດອບ ໃນຮູບແບບສິນຄ້າ** ໝາຍເຖິງ ສິນຄ້າທີ່ຜ່ານຂະບວນການຜະລິດ, ປຸງແຕ່ງ ໂດຍນໍາໃຊ້ແຮງງານ, ຫົວຄິດປະດິດສ້າງ, ພູມປັນຍາ ແລະ ຊັບພະຍາກອນພາຍໃນທ້ອງຖິ່ນ ເປັນເອກະລັກໂດດເດັ່ນ, ເປັນມູນເຊື້ອມາຍາວນານ ທີ່ສາມາດຈັບບາຍໄດ້ ເຊັ່ນ: ສິນຄ້າຫັດຖະກໍາ, ອາຫານ ແລະ ເຄື່ອງດື່ມ, ຢາພື້ນເມືອງ, ເຄື່ອງສໍາອາງ ແລະ ອື່ນໆ;
3. **ສິນຄ້າ ໂອດອບ ໃນຮູບແບບບໍລິການ** ໝາຍເຖິງ ສິນຄ້າໃນຮູບແບບ, ວິທີການຕົບແຕ່ງສະຖານທີ່ໃຫ້ບໍລິການ ຫຼື ລະບົບວິທີການໃຫ້ບໍລິການ ທີ່ເປັນເອກະລັກ ທີ່ສ່ອງແສງເຖິງສິລະປະວັດທະນະທໍາ, ສະຖານທີ່ທ່ອງທ່ຽວ, ຮີດຄອງປະເພນີ, ແບບແຜນວິທີດໍາລົງຊີວິດທີ່ໂດດເດັ່ນ, ເປັນທີ່ຮູ້ຈັກ, ເປັນມູນເຊື້ອ;
4. **ຜູ້ປະກອບກິດຈະການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລົງທຶນ, ດໍາເນີນການຜະລິດ ແລະ ບໍລິການໂອດອບ;
5. **ຜະລິດຕະພາບ** ໝາຍເຖິງ ປະສິດທິພາບ ໃນການຜະລິດສິນຄ້າຂອງຜູ້ຜະລິດສິນຄ້າ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ວຽກງານໂອດອບ**

ລັດ ຊຸກຍູ້ ແລະ ສົ່ງເສີມວຽກງານໂອດອບ ດ້ວຍການວາງນະໂຍບາຍ, ມາດຕະການ, ສ້າງກົນໄກ, ສ້າງສະພາບແວດລ້ອມ ແລະ ສິ່ງອໍານວຍຄວາມສະດວກອື່ນ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເພື່ອພັດທະນາ ໂອດອບ ໃຫ້ຫຼາກຫຼາຍ, ເຂັ້ມແຂງ, ທັນສະໄໝ ຕາມທິດສີຂຽວ ແລະ ຍືນຍົງ.

ລັດ ຊຸກຍູ້ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ພາກທຸລະກິດ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານໂອດອບ ເພື່ອໃຫ້ທຸກພາກສ່ວນ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ລັດ ສົ່ງເສີມໃຫ້ມີການລົງທຶນ, ພັດທະນາຕໍ່ຍອດ, ການເສີມສ້າງ, ປະດິດຄິດແຕ່ງ ໂອດອບ ໃຫ້ກ້າວໄປສູ່ການຜະລິດເປັນສິນຄ້າ ທີ່ມີມາດຖານ ຄຸນນະພາບ ເປັນສິນຄ້າອຸດສາຫະກໍາ.

**ມາດຕາ 5 ຫຼັກການ ກ່ຽວກັບ ວຽກງານໂອດອບ**

ວຽກງານ ໂອດອບ ຈະຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດໃນແຕ່ລະໄລຍະ;
2. ຮັບປະກັນ ຮັກສາ ແລະ ເສີມຂະຫຍາຍມູນເຊື້ອ, ຄວາມເປັນເອກະລັກ, ສີໄມ້ລາຍມື, ການປະດິດຄິດແຕ່ງ, ວັດທະນະທໍາ ແລະ ຮີດຄອງປະເພນີ ທີ່ດີງາມຂອງຊາດ, ຂອງເຜົ່າ;
3. ປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທໍາ, ການແກ້ໄຂຄວາມທຸກຍາກ, ການພັດທະນາສີມືແຮງງານ ແລະ ຍົກສູງຄຸນນະພາບຊີວິດຂອງປະຊາຊົນ ບົນພື້ນຖານການນໍາໃຊ້ພູມປັນຍາທ້ອງຖິ່ນ;
4. ເປີດເຜີຍ, ມີຄວາມໂປ່ງໃສ, ຍຸຕິທໍາ ແລະ ສາມາດກວດສອບໄດ້.

**ມາດຕາ 6 ຂອບເຂດການນໍາໃຊ້**

ດໍາລັດສະບັບນີ້ ນໍາໃຊ້ ສໍາລັບບຸກຄົນ, ນິຕິບຸກຄົນ, ກຸ່ມ, ສະຫະກອນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ຫຼື ເຄື່ອນໄຫວຕິດພັນກັບວຽກງານໂອດອບ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບ ວຽກງານໂອດອບ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ການພັດທະນາບຸກຄະລາກອນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ຂະຫຍາຍຕົວ, ເຂັ້ມແຂງ, ທັນສະໄໝ ແລະ ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ໝວດທີ 2
## ຄວາມໝາຍ ແລະ ການນໍາໃຊ້ ກາໝາຍໂອດອບ

**ມາດຕາ 8 ຄວາມໝາຍ ກາໝາຍໂອດອບ**

ກາໝາຍໂອດອບ ປະກອບມີ: ເລກໜຶ່ງລາວ, ລວດລາຍໃນເລກໜຶ່ງລາວ ແລະ ສີແທ້ຂອງກາໝາຍ ຊຶ່ງແຕ່ລະອົງປະກອບມີຄວາມໝາຍ ດັ່ງນີ້:

ODOP

ONE DISTRICT ONE PRODUCT

1. **ເລກໜຶ່ງລາວ (໑)** ສ່ອງແສງໃຫ້ເຫັນຂະບວນການຜະລິດສິນຄ້າ ແລະ ຮູບແບບການບໍລິການ ທີ່ເປັນເອກະລັກ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ຢູ່ ສປປ ລາວ ແລະ ມີຄວາມໝາຍວ່າ ເປັນວຽກບຸລິມະສິດ ຂອງລັດຖະບານ ໃນການແກ້ໄຂຄວາມທຸກຍາກ, ສ້າງວຽກເຮັດງານທໍາ ແລະ ສ້າງລາຍໄດ້ໃຫ້ແກ່ປະຊາຊົນ ບົນພື້ນຖານການນໍາໃຊ້ພູມປັນຍທ້ອງຖິ່ນ ແລະ ທ່າແຮງຂອງທ້ອງຖິ່ນ;
2. **ລວດລາຍໃນເລກໜຶ່ງລາວ** ສ່ອງແສງຄວາມປານີດ, ສີໄມ້ລາຍມື ແລະ ພູມປັນຍາທ້ອງຖິ່ນຂອງປະຊາຊົນລາວ;
3. **ສີຂອງກາໝາຍ** ແມ່ນສີມໍລະກົດ ຊຶ່ງເປັນສີແຫ່ງສັນຍາລັກຂອງການພັດທະນາເສດຖະກິດ, ການຄ້າ. ສໍາລັບຂະໜາດຂອງກາໝາຍ ແມ່ນບໍ່ຕາຍຕົວ ຂຶ້ນກັບລັກສະນະ ແລະ ຂະໜາດຂອງຜະລິດຕະພັນ.

**ມາດຕາ 9 ການນໍາໃຊ້ ກາໝາຍໂອດອບ**

ກາໝາຍໂອດອບ ນໍາໃຊ້ດັ່ງນີ້:

1. ຕິດໃສ່ຜະລິດຕະພັນສິນຄ້າ ຫຼື ສະຖານທີ່ບໍລິການ ທີ່ໄດ້ຮັບໃບອະນຸຍາດນໍາໃຊ້ກາໝາຍໂອດອບ;
2. ຕິດ ຫຼື ພິມໃສ່ເສື້ອຜ້າ, ເອກະສານ, ສິ່ງພິມ, ສະຖານທີ່ຜະລິດ, ສະຖານທີ່ຈັດກິດຈະກໍາ, ສູນຈໍາໜ່າຍສິນຄ້າ, ງານວາງສະແດງສິນຄ້າ ແລະ ອື່ນໆ ເພື່ອເຜີຍແຜ່, ໂຄສະນາ ແລະ ສ້າງພາບພົດທີ່ດີໃຫ້ແກ່ຂະບວນການສົ່ງເສີມສິນຄ້າໂອດອບ;
3. ໃຊ້ໃນກິດຈະກໍາອື່ນໆ ທີ່ເປັນການສົ່ງເສີມສິນຄ້າໂອດອບ.

## ໝວດທີ 3
## ການຂໍອະນຸຍາດນຳໃຊ້ກາໝາຍໂອດອບ

**ມາດຕາ 10 ການສະເໜີຂໍນຳໃຊ້ກາໝາຍໂອດອບ**

ການຂໍນຳໃຊ້ກາໝາຍໂອດອບ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂໍນຳໃຊ້ກາໝາຍໂອດອບ ໃຫ້ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ນຳຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ບ່ອນທີ່ຜະລິດສິນຄ້າ ຫຼື ການບໍລິການ ເພື່ອຄົ້ນຄວ້າ ແລະ ພິຈາລະນາຕາມຂັ້ນຕອນ ພາຍໃນກຳນົດເວລາ 10 ວັນລັດຖະການ.
2. ພາຍຫຼັງຄະນະກຳມະການຂັ້ນເມືອງຮັບຮອງແລ້ວ, ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ນຳສົ່ງສຳນວນເອກະສານພ້ອມໃບຢັ້ງຢືນ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເພື່ອສະເໜີຄະນະກຳມະການຄັດເລືອກຂັ້ນແຂວງ ພິຈາລະນາ ພາຍໃນກຳນົດເວລາ 15 ວັນລັດຖະການ.
3. ຫຼັງຈາກຄະນະກຳມະການຂັ້ນແຂວງຮັບຮອງແລ້ວ, ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ນຳສົ່ງສຳນວນເອກະສານພ້ອມໃບຢັ້ງຢືນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາອອກໃບອະນຸຍາດນຳໃຊ້ກາໝາຍ ໂອດອບ ພາຍໃນກຳນົດເວລາ 10 ວັນລັດຖະການ.

**ມາດຕາ 11 ເງື່ອນໄຂສິນຄ້າ ໂອດອບ ໃນຮູບແບບສິນຄ້າ**

1. ຜະລິດໂດຍ ບຸກຄົນ, ນິຕິບຸກຄົນ, ກຸ່ມ, ສະຫະກອນ ຫຼື ການຈັດຕັ້ງພາຍໃນປະເທດ;
2. ນຳໃຊ້ວັດຖຸດິບພາຍໃນເຂົ້າໃນການຜະລິດເປັນຫຼັກ;
3. ເປັນຊັບສິນທາງປັນຍາຂອງຜູ້ຜະລິດ;
4. ມີໂຮງງານ, ໂຮງເຮືອນ, ຫ້ອງ ຫຼື ສະຖານທີ່ຜະລິດ, ປຸງແຕ່ງ, ຫຸ້ມຫໍ່ ທີ່ໄດ້ມາດຕະຖານ ໃນລະດັບໃດໜຶ່ງທີ່ແນ່ນອນ;
5. ການຜະລິດ ແລະ ອອກແບບສິນຄ້າ ມີຄວາມເປັນເອກະລັກສະເພາະ ໂດດເດັ່ນ ຕິດພັນກັບມູນເຊື້ອ, ວັດທະນະທຳ ແລະ ຮີດຄອງປະເພນີຂອງຊາດ, ຂອງເຜົ່າ, ທ່ອງຖິ່ນ ແລະ ຊຸມຊົນ;
6. ເປັນສິນຄ້າ ທີ່ດຳເນີນການຜະລິດຖືກຕ້ອງຕາມກົດໝາຍ, ມາດຕະຖານ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ ໂດຍຮັບປະກັນຄວາມປອດໄພທາງດ້ານສຸຂະພາບ, ຊີວິດ, ຊັບສິນ ແລະ ຜົນປະໂຫຍດຂອງຜູ້ຊົມໃຊ້ ແລະ ມີຜົນກະທົບນ້ອຍຕໍ່ສິ່ງແວດລ້ອມ.

**ມາດຕາ 12 ເງື່ອນໄຂສິນຄ້າ ໂອດອບ ໃນຮູບແບບບໍລິການ**

1. ບໍລິການໂດຍບຸກຄົນ, ນິຕິບຸກຄົນ, ກຸ່ມ, ສະຫະກອນ ຫຼື ການຈັດຕັ້ງພາຍໃນປະເທດ;
2. ເປັນຊັບສິນທາງປັນຍາຂອງຊາດລາວ;
3. ນຳໃຊ້ວັດຖຸດິບພາຍໃນເຂົ້າໃນການຕົບແຕ່ງ ຫຼື ໃຫ້ບໍລິການ ເປັນຫຼັກ;

4. ຮູບແບບ, ວິທີການຕົບແຕ່ງ, ລວດລາຍ ຫຼື ການບໍລິການ ຕ້ອງສ່ອງແສງເຖິງສິນລະປະ, ວັດທະນະທຳ, ຮີດຄອງປະເພນີ, ສະຖານທີ່ທ່ອງທ່ຽວ, ແບບແຜນວິຖີການດຳລົງຊີວິດ, ສະແດງໃຫ້ເຫັນຄວາມເປັນເອກະລັກ, ໜຶ່ງດຽວ, ໂດດເດັ່ນ, ເປັນທີ່ຮູ້ຈັກ, ເປັນມູນເຊື້ອຂອງຊາດ, ຂອງປະຊາຊົນບັນດາເຜົ່າ;
5. ໃຫ້ການບໍລິການຖືກຕ້ອງຕາມກົດໝາຍ, ມາດຕະຖານ ແລະ ລະບຽບການຂອງຂະແໜງທີ່ກ່ຽວຂ້ອງ, ໂດຍຮັບປະກັນຄວາມປອດໄພທາງດ້ານສຸຂະພາບ, ຊີວິດ, ຊັບສິນ ແລະ ຜົນປະໂຫຍດຂອງຜູ້ຊົມໃຊ້, ຜູ້ໃຊ້ບໍລິການ ແລະ ມີຜົນກະທົບນ້ອຍຕໍ່ສິ່ງແວດລ້ອມ.

**ມາດຕາ 13 ເອກະສານປະກອບການພິຈາລະນາ**

ເອກະສານປະກອບການພິຈາລະນາ ປະກອບດ້ວຍ:

1. ໃບສະເໜີຂໍນຳໃຊ້ກາໝາຍໂອດອບ ຕາມແບບພິມ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດ;
2. ສຳເນົາໃບອະນຸຍາດສ້າງຕັ້ງກຸ່ມ ຫຼື ສະຫະກອນ (ຖ້າມີ);
3. ສຳເນົາໃບອະນຸຍາດດຳເນີນທຸລະກິດ (ຖ້າມີ);
4. ໃບຢັ້ງຢືນ ຫຼື ຂໍ້ຕົກລົງຮັບຮອງຈາກຄະນະກຳມະການສົ່ງເສີມສິນຄ້າໂອດອບຂັ້ນເມືອງ, ແຂວງ;
5. ສຳເນົາໃບວິໄຈຄຸນນະພາບ ຫຼື ໃບຢັ້ງຢືນການຂຶ້ນທະບຽນ ອຢ (ກໍລະນີ ເປັນສິນຄ້າປະເພດອາຫານ ແລະ ເຄື່ອງດື່ມ, ຢາພື້ນເມືອງ, ເຄື່ອງສຳອາງ ແລະ ອື່ນໆ);
6. ສຳເນົາໃບຢັ້ງຢືນມາດຕະຖານ, ຄຸນນະພາບອື່ນ ຈາກຂະແໜງການ ທີ່ກ່ຽວຂ້ອງ (ຖ້າມີ);
7. ເອກະສານອື່ນທີ່ກ່ຽວຂ້ອງ. (ຖ້າມີ)

**ມາດຕາ 14 ອາຍຸການນຳໃຊ້ກາໝາຍໂອດອບ**

ອາຍຸການນຳໃຊ້ ກາໝາຍ ສິນຄ້າໂອດອບ ແມ່ນອີງໃສ່ ສັນຍາ ການນຳໃຊ້ ກາໝາຍ ໂອດອບ, ຊຶ່ງມີອາຍຸການນຳໃຊ້ ໄລຍະ 3 ປີ, ກ່ອນໝົດອາຍຸ 3 ເດືອນ ໃຫ້ສະເໜີຂໍຕໍ່ອາຍຸການນຳໃຊ້ກາໝາຍຕາມຂັ້ນຕອນທີ່ໄດ້ກຳນົດໃນມາດຕາ 10, ຖ້າບໍ່ຕໍ່ອາຍຸ ຖືວ່າຈະຖືກລຶບລ້າງໃນຕົວ.

**ມາດຕາ 15 ການໂຈະ ຫຼື ຖອນ ກາໝາຍໂອດອບ**

ກາໝາຍໂອດອບ ຈະຖືກໂຈະ ຫຼື ຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີຂອງຜູ້ປະກອບກິດຈະການໂອດອບ;
2. ດຳເນີນການຜະລິດ ຫຼື ບໍລິການ ບໍ່ຖືກຕ້ອງຕາມມາດຕະຖານ ແລະ ລະບຽບການຂອງຂະແໜງການ ແລະ ບໍ່ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;
3. ສ້າງຜົນເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

**ມາດຕາ 16 ການຍົກເລີກກາໝາຍໂອດອບ**

ກາໝາຍໂອດອບ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້ :

1. ຜູ້ປະກອບກິດຈະການໂອດອບ ບໍ່ປັບປຸງ ແລະ ແກ້ໄຂຕາມການແຈ້ງໂຈະ;
2. ຜູ້ປະກອບກິດຈະການ ສະເໜີຂໍຍົກເລີກ ຫຼື ບໍ່ມາຕໍ່ສັນຍານຳໃຊ້ກາໝາຍໂອດອບ;

3. ລະເມີດກົດໝາຍ, ລະບຽບການ ຊຶ່ງໄດ້ສ້າງຜົນເສຍຫາຍ ຕໍ່ເສດຖະກິດ - ສັງຄົມ ແລະ ສິ່ງແວດລ້ອມ.

## ໝວດທີ 4
## ການປະດັບດາວນາມມະຍົດ ໃຫ້ສິນຄ້າໂອດອບ

**ມາດຕາ 17 ການປະດັບດາວນາມມະຍົດ**

ເພື່ອສ້າງມູນຄ່າເພີ່ມ ໃຫ້ແກ່ສິນຄ້າໂອດອບ ແລະ ສ້າງຄວາມເຊື່ອໝັ້ນ ໃຫ້ຜູ້ຊົມໃຊ້, ໂອດອບ ຈະໄດ້ຮັບການປະດັບນາມມະຍົດ 1 ດາວ ຫາ 5 ດາວ. ການຄັດເລືອກປະດັບດາວນາມະຍົດ ໃຫ້ສິນຄ້າໂອດອບ ແມ່ນການຈັດລຳດັບປະເພດສິນຄ້າໂອດອບ ເພື່ອໃຫ້ຜູ້ບໍລິໂພກ ແລະ ຜູ້ໃຊ້ບໍລິການ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ຮັບຮູ້ເຖິງມາດຕະຖານ ແລະ ຄຸນນະພາບຂອງສິນຄ້າໂອດອບ ແຕ່ 1 ດາວ ຫາ 5 ດາວ.

**ມາດຕາ 18 ສັນຍາລັກ ເຄື່ອງໝາຍດາວນາມມະຍົດ**

ສັນຍາລັກດາວນາມມະຍົດ ແມ່ນຖືເອົາ ກາດາວ 1 ດາວ ຫາ 5 ດາວ ເປັນສັນຍາລັກ ເພື່ອປະດັບໃສ່ຜະລິດຕະພັນ ທີ່ໄດ້ຮັບກາໝາຍໂອດອບ.

**ມາດຕາ 19 ການຈັດລະດັບດາວນາມມະຍົດ**

ການປະດັບດາວນາມມະຍົດ ແມ່ນການຄັດເລືອກຈັດລະດັບປະເພດຜະລິດຕະພັນ ໂດຍໃຊ້ຫຼັກການໃຫ້ຄະແນນ ໃຫ້ແຕ່ລະປະເພດສິນຄ້າ ທີ່ນຳມາປະກວດຄັດເລືອກ ເຊິ່ງກຳນົດຄະແນນລວມໄວ້ 100 ຄະແນນ, ໂດຍປະກອບມີ 5 ລະດັບ ດັ່ງນີ້:

1. ລະດັບ 5 ດາວ (ຄະແນນ 80-100) ແມ່ນສິນຄ້າ ທີ່ມີຄຸນນະພາບ ມາດຕະຖານ ໃນລະດັບດີເລີດ ເປັນທີ່ຍອມຮັບຂອງຕະຫຼາດ ແລະ ສາມາດສົ່ງອອກ;
2. ລະດັບ 4 ດາວ (ຄະແນນ 60-79) ແມ່ນສິນຄ້າ ທີ່ມີຄຸນນະພາບ ມາດຕະຖານ ໃນລະດັບດີ ແລະ ສາມາດພັດທະນາກ້າວສູ່ການສົ່ງອອກ;
3. ລະດັບ 3 ດາວ (ຄະແນນ 50-59) ແມ່ນສິນຄ້າ ທີ່ມີຄຸນນະພາບ ມາດຕະຖານ ໃນລະດັບປານກາງ ສາມາດພັດທະນາສູ່ລະດັບ 4 ດາວ;
4. ລະດັບ 2 ດາວ (ຄະແນນ 31-49) ແມ່ນສິນຄ້າ ທີ່ມີຄຸນນະພາບ ມາດຕະຖານ ໃນລະດັບໜຶ່ງທີ່ແນ່ນອນ ສາມາດພັດທະນາສູ່ລະດັບ 3 ດາວ;
5. ລະດັບ 1 ດາວ (ຄະແນນ 30 ລົງມາ) ແມ່ນສິນຄ້າທີ່ຍັງມີຈຸດຄົງຄ້າງ ຕ້ອງການປັບປຸງຫຼາຍດ້ານ.

**ມາດຕາ 20 ເງື່ອນໄຂຂອງສິນຄ້າ ທີ່ຈະນຳມາຄັດເລືອກປະດັບດາວນາມມະຍົດ**

1. ຕ້ອງເປັນສິນຄ້າ ໂອດອບ ໃນຮູບແບບສິນຄ້າ ທີ່ສາມາດຈັບບາຍໄດ້;
2. ຕ້ອງເປັນສິນຄ້າທີ່ມີການຫຸ້ມຫໍ່, ມີການຕິດສະຫຼາກ, ເຄື່ອງໝາຍການຄ້າ ແລະ ມາດຖານ ຄຸນນະພາບ ໃນລະດັບໃດໜຶ່ງ ທີ່ແນ່ນອນ;

3. ຜະລິດຕະພັນທີ່ຈະເອົາມາຄັດເລືອກ ຕ້ອງເປັນຜະລິດຕະພັນ ທີ່ພົ້ນເດັ່ນຂອງຜູ້ປະກອບກິດຈະການ ບໍ່ໃຫ້ເກີນ 5 ຜະລິດຕະພັນ ຕໍ່ 1 ຫົວໜ່ວຍ ຕໍ່ 1 ຄັ້ງ ປະກວດ;
4. ການຄັດເລືອກປະດັບດາວນາມມະຍົດ ແມ່ນຂຶ້ນກັບຄວາມສະໝັກໃຈຂອງຜູ້ປະກອບກິດຈະການ;

**ມາດຕາ 21 ການອອກໃບຢັ້ງຢືນ ດາວນາມມະຍົດ 1 ດາວ ຫາ 5 ດາວ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຢາກເອົາສິນຄ້າມາປະກວດ ເພື່ອປະດັບດາວນາມມະຍົດ ແມ່ນໃຫ້ສະເໜີຜ່ານຫ້ອງການອຸດສາຫະກໍາ ແລະ ການຄ້າຂັ້ນເມືອງ ບ່ອນທີ່ຜະລິດສິນຄ້າ ຫຼື ການບໍລິການ ເພື່ອພິຈາລະນາ.

ການອອກໃບຢັ້ງຢືນປະດັບດາວນາມມະຍົດ ມີດັ່ງນີ້:

- ລະດັບ 5 ແລະ 4 ດາວ ແມ່ນກົມສົ່ງເສີມການຄ້າ ແລະ ຫັດຖະກໍາ, ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຜູ້ພິຈາລະນາ ແລະ ອອກໃບຢັ້ງຢືນ;
- ລະດັບ 3 ແລະ 2 ດາວ ແມ່ນພະແນກອຸດສາຫະກໍາ ແລະ ການຄ້າແຂວງ/ນະຄອນຫຼວງ ເປັນຜູ້ພິຈາລະນາ ແລະ ອອກໃບຢັ້ງຢືນ;
- ລະດັບ 1 ດາວ ແມ່ນຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ/ນະຄອນ ເປັນຜູ້ພິຈາລະນາ ແລະ ອອກໃບຢັ້ງຢືນ.

**ມາດຕາ 22 ຮູບແບບ, ວິທີການຄັດເລືອກປະດັບດາວນາມມະຍົດ**

ສໍາລັບລາຍລະອຽດ ກ່ຽວກັບ ລະບຽບ, ຮູບແບບ ແລະ ວິທີການໃຫ້ຄະແນນຄັດເລືອກປະດັບດາວນາມມະຍົດ ໄດ້ກໍານົດໄວ້ໃນລະບຽບຕ່າງຫາກ. ມອບໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ສ້າງແບບຟອມໃຫ້ຄະແນນ ຫຼື ປຶ້ມແນະນໍາ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ.

**ມາດຕາ 23 ອາຍຸຂອງການນໍາໃຊ້ດາວນາມມະຍົດ**

ອາຍຸຂອງການນໍາໃຊ້ດາວນາມມະຍົດ ແມ່ນອີງໃສ່ອາຍຸສັນຍາອອກໃບອະນຸຍາດນໍາໃຊ້ກາໝາຍໂອດອບ.

## ໝວດທີ 5
## ການສົ່ງເສີມ ສິນຄ້າໂອດອບ

**ມາດຕາ 24 ການສົ່ງເສີມ ສິນຄ້າໂອດອບ**

ການສົ່ງເສີມໂອດອບ ປະກອບດ້ວຍ:

1. ການສ້າງສະພາບແວດລ້ອມ ທີ່ເອື້ອອໍານວຍ;
2. ການເຂົ້າເຖິງແຫຼ່ງທຶນ;
3. ການໃຫ້ນະໂຍບາຍດ້ານ ພາສີ ແລະ ອາກອນ;

4. ການສ້າງ ແລະ ພັດທະນາຜູ້ປະກອບກິດຈະການ;
5. ການບໍລິການດ້ານວິຊາການ ແລະ ໃຫ້ຄໍາປຶກສາ;
6. ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ;
7. ການນໍາໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ;
8. ການນໍາໃຊ້ ແລະ ການປົກປ້ອງສິດທາງດ້ານຊັບສິນທາງປັນຍາ;
9. ການສະໜອງ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ;
10. ການສົ່ງເສີມການປະດິດ ແລະ ນໍາໃຊ້ນະວັດຕະກໍາ.

**ມາດຕາ 25 ການສ້າງສະພາບແວດລ້ອມ ທີ່ເອື້ອອໍານວຍ**

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງເອົາໃຈໃສ່ ຕໍ່ ການສ້າງສະພາບແວດລ້ອມ ທີ່ເອື້ອອໍານວຍໃຫ້ແກ່ການຜະລິດ ຫຼື ການບໍລິການໂອດອບ ດ້ວຍການສ້າງ ແລະ ປັບປຸງລະບຽບການ, ກົນໄກ ໃຫ້ມີຄວາມຈະແຈ້ງ ແລະ ຮັດກຸມ ເພື່ອອໍານວຍຄວາມສະດວກໃຫ້ແກ່ການສ້າງຕັ້ງ, ດໍາເນີນ ແລະ ພັດທະນາທຸລະກິດ, ພ້ອມນັ້ນ ແກ້ໄຂບັນຫາທີ່ເປັນການກີດໜ່ວງການພັດທະນາຂອງຜູ້ປະກອບກິດຈະການໂອດອບ ເພື່ອຫຼຸດຜ່ອນຕົ້ນທຶນ, ເວລາ ແລະ ຍົກສູງປະສິດທິພາບ, ປະສິດທິຜົນຂອງການຜະລິດ.

**ມາດຕາ 26 ການເຂົ້າເຖິງແຫຼ່ງທຶນ**

ຜູ້ປະກອບກິດຈະການ ຈະໄດ້ຮັບຄໍາແນະນໍາ, ການໃຫ້ຄໍາປຶກສາ, ການສ້າງຄວາມເຂັ້ມແຂງ ໃນການສົ່ງເສີມເຂົ້າຫາແຫຼ່ງທຶນ.

ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າຊອກຫາແຫຼ່ງທຶນ ຫຼື ສ້າງເງື່ອນໄຂໃຫ້ແກ່ຜູ້ຜະລິດ ຫຼື ການບໍລິການໂອດອບ ສາມາດເຂົ້າເຖິງແຫຼ່ງທຶນ.

ທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າ ແລະ ກໍານົດມາດຕະການ, ລະບຽບການຕ່າງໆ ເພື່ອຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ອອກຜະລິດຕະພັນດ້ານການເງິນຫຼາຍປະເພດໃນການສະໜອງສິນເຊື່ອ ເຊັ່ນ: ການຄໍ້າປະກັນສິນເຊື່ອ, ການເຊົ່າສິນເຊື່ອ, ການຮ່ວມລົງທຶນ ແລະ ອື່ນໆ ເພື່ອຮັບປະກັນໃຫ້ຜູ້ປະກອບກິດຈະການໂອດອບ ສາມາດເຂົ້າເຖິງແຫຼ່ງທຶນໄດ້ຢ່າງສະດວກ, ວ່ອງໄວ, ກວ້າງຂວາງ ແລະ ທົ່ວເຖິງ.

**ມາດຕາ 27 ການໃຫ້ນະໂຍບາຍດ້ານ ພາສີ, ອາກອນ ແລະ ຄ່າທໍານຽມ**

ລັດ ໃຫ້ນະໂຍບາຍສົ່ງເສີມໂອດອບ ດ້ານພາສີ ແລະ ອາກອນ ດັ່ງນີ້:

1. ໄດ້ຮັບນະໂຍບາຍ ຍົກເວັ້ນເກັບຄ່າທໍານຽມ ແລະ ຄ່າບໍລິການ ອອກໃບອະນຸຍາດນໍາໃຊ້ກາໝາຍໂອດອບ, ສ່ວນການຕໍ່ໃບອະນຸຍາດ ໃຫ້ເສຍຄ່າທໍານຽມ ແລະ ຄ່າບໍລິການ ຕາມລະບຽບການ;
2. ໄດ້ຮັບນະໂຍບາຍຍົກເວັ້ນອາກອນກໍາໄລຈາກການດໍາເນີນກິດຈະການ, ນະໂຍບາຍຍົກເວັ້ນພາສີ ແລະ ອາກອນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ເປັນຕົ້ນ: ກົດໝາຍວ່າ

ດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍອາກອນລາຍໄດ້, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍພາສີ ແລະ ອື່ນໆ.

**ມາດຕາ 28 ການສ້າງ ແລະ ພັດທະນາຜູ້ປະກອບກິດຈະການ**

ລັດ ສົ່ງເສີມການສ້າງ ແລະ ພັດທະນາ ຜູ້ປະກອບກິດຈະການ ດັ່ງນີ້:

1. ສົ່ງເສີມພາກສ່ວນຕ່າງໆ ສ້າງສູນຝຶກ ແລະ ຝຶກອົບຮົມ ເພື່ອສ້າງ ແລະ ພັດທະນາ ຜູ້ປະກອບກິດຈະການ;
2. ສົ່ງເສີມສະຖາບັນ, ໂຮງຮຽນ, ວິທະຍາໄລ ສ້າງຫຼັກສູດ ກ່ຽວກັບ ການອອກແບບ, ການປຸງແຕ່ງແປຮູບ, ການຫຸ້ມຫໍ່, ການສ້າງຍີ່ຫໍ້ ເພື່ອພັດທະນາສິນຄ້າ ໃຫ້ມີຄວາມຫຼາກຫຼາຍ ແລະ ມີຄຸນນະພາບ;
3. ສົ່ງເສີມ ແລະ ສ້າງເງື່ອນໄຂ ທີ່ກະຕຸ້ນໃຫ້ເກີດມີຜູ້ປະກອບກິດຈະການໂອດອບໃໝ່;
4. ໃຫ້ການຊ່ວຍເຫຼືອຜູ້ປະກອບກິດຈະການໃນການພັດທະນາ, ສ້າງຄວາມເຂັ້ມແຂງໃຫ້ຕົນເອງ ດ້ວຍການຈັດຝຶກອົບຮົມ, ສະໜອງທຶນສົມທົບ ຫຼື ສ້າງເງື່ອນໄຂ ໃຫ້ໄດ້ເຂົ້າຮ່ວມການຍົກລະດັບຄວາມຮູ້ ຢູ່ ພາຍໃນ ແລະ ຕ່າງປະເທດ;
5. ສົ່ງເສີມການຈັດກິດຈະກຳ ກ່ຽວກັບ ການສ້າງຜູ້ປະກອບກິດຈະການໂອດອບ ເຊັ່ນ: ການປະກວດຄັດເລືອກຜະລິດຕະພັນ ເພື່ອປະດັບດາວນາມມະຍົດ, ການປະກວດອອກແບບຜະລິດຕະພັນລາວດີເດັ່ນ, ການຍ້ອງຍໍຜູ້ປະກອບກິດຈະການດີເດັ່ນ ແລະ ກິດຈະກຳສົ່ງເສີມອື່ນໆ.

**ມາດຕາ 29 ການບໍລິການດ້ານວິຊາການ ແລະ ໃຫ້ຄຳປຶກສາ**

ຂະແໜງການທີ່ກ່ຽວຂ້ອງ ເປັນເຈົ້າການໃນການບໍລິການດ້ານວິຊາການ ແລະ ໃຫ້ຄຳປຶກສາແກ່ຜູ້ປະກອບການກິດຈະການ ດ້ວຍການສ້າງຕັ້ງໜ່ວຍງານ ແລະ ສ້າງຊ່ຽວຊານສະເພາະດ້ານ ເພື່ອເຄື່ອນໄຫວໃຫ້ບໍລິການດ້ານວິຊາການ ແລະ ໃຫ້ຄຳປຶກສາ ແນໃສ່ພັດທະນາຜູ້ປະກອບກິດຈະການໂອດອບ ໃຫ້ເຕີບໃຫຍ່ເຂັ້ມແຂງ;

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂ ແລະ ກົນໄກໃນການໃຫ້ການບໍລິການດ້ານວິຊາການ ແລະ ໃຫ້ຄຳປຶກສາ ແກ່ຜູ້ປະກອບກິດຈະການໂອດອບ ຕາມພາລະບົດບາດຂອງຕົນ, ພ້ອມທັງຊຸກຍູ້ພາກສ່ວນຕ່າງໆ ໃຫ້ການບໍລິການດ້ານວິຊາການ ແລະ ໃຫ້ຄຳປຶກສາ ແກ່ຜູ້ປະກອບການ.

**ມາດຕາ 30 ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ**

ຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງສ້າງ ແລະ ກຳນົດນະໂຍບາຍ, ລະບຽບການ ເພື່ອໃຫ້ຜູ້ປະກອບກິດຈະການໂອດອບ ສາມາດເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ ໄດ້ຢ່າງກວ້າງຂວາງ;

ຂະແໜງການທີ່ກ່ຽວຂ້ອງ ສ້າງເງື່ອນໄຂ ອຳນວຍຄວາມສະດວກ ແລະ ສະໜັບສະໜູນ ເພື່ອໃຫ້ຜູ້ປະກອບກິດຈະການໂອດອບສາມາດເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ ດ້ວຍການຈັດກິດຈະກຳຕ່າງໆ ເປັນຕົ້ນ: ງານວາງສະແດງສິນຄ້າພາຍໃນ ແລະ ຕ່າງປະເທດ, ງານຕະຫຼາດນັດ, ສົ່ງເສີມການຂາຍຕິດພັນກັບການທ່ອງທ່ຽວ, ສ້າງ

ແລະ ພັດທະນາແຜລດຟອມການຄ້າທາງເອເລັກໂຕຣນິກ, ການໂຄສະນາສິນຄ້າ, ການສຶກສາ ແລະ ເຈລະຈາເຂົ້າຫາຕະຫຼາດ, ການແນະນຳຜະລິດຕະພັນໃໝ່, ການຈັບຄູ່ທຸລະກິດ, ການຮ່ວມລົງທຶນພັດທະນາສິນຄ້າ ແລະ ອື່ນໆ.

### ມາດຕາ 31 ການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ

ລັດ ສົ່ງເສີມຜູ້ປະກອບກິດຈະການ ນຳໃຊ້ເຕັກໂນໂລຊີ ທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ ຜູ້ປະກອບກິດຈະການ ຄົ້ນຄວ້າ ແລະ ນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ ເຂົ້າໃນການຜະລິດສິນຄ້າ, ການອອກແບບການຫຸ້ມ, ການຕະຫຼາດ ແລະ ການບໍລິການ;
2. ສະໜອງທຶນໃນຮູບແບບຕ່າງໆ ໃຫ້ຜູ້ປະກອບກິດຈະການ ນຳໃຊ້ເຂົ້າໃນການຈັດຊື້ ແລະ ປັບປຸງເຕັກໂນໂລຊີ ໃຫ້ທັນສະໄໝ ແລະ ແທດເໝາະກັບການດຳເນີນທຸລະກິດ;
3. ຊຸກຍູ້, ສົ່ງເສີມສະຖາບັນຄົ້ນຄວ້າ, ສະຖາບັນການສຶກສາ, ອົງກອນ ແລະ ພາກທຸລະກິດ ຄົ້ນຄວ້າ, ວິໄຈ ແລະ ພັດທະນາເຕັກໂນໂລຊີ ທີ່ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຖ່າຍທອດໃຫ້ຜູ້ປະກອບກິດຈະການໂອດອບ ນຳໃຊ້ເຂົ້າໃນການດຳເນີນການຜະລິດສິນຄ້າ, ການອອກແບບຫຸ້ມຫໍ່, ການຕະຫຼາດ ແລະ ການບໍລິການ ໃຫ້ມີຜະລິດຕະພາບ ແລະ ຄຸນນະພາບສູງຂຶ້ນ.

### ມາດຕາ 32 ການນຳໃຊ້ ແລະ ການປົກປ້ອງສິດທາງດ້ານຊັບສິນທາງປັນຍາ

ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສົ່ງເສີມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການປົກປ້ອງ, ການປະດິດສ້າງ, ປະດິດຄິດແຕ່ງຜະລິດຕະພັນໂອດອບ ໂດຍສະເພາະການຈົດທະບຽນ ແລະ ການປົກປ້ອງສິດ ຕໍ່ ຊັບສິນທາງປັນຍາ.

### ມາດຕາ 33 ການສະໜອງ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ

ຂະແໜງການທີ່ກ່ຽວຂ້ອງ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງ ແລະ ພັດທະນາລະບົບຖານຂໍ້ມູນ, ຂ່າວສານກ່ຽວກັບໂອດອບ ເພື່ອໃຫ້ຜູ້ປະກອບກິດຈະການ ແລະ ສັງຄົມ ໄດ້ເຂົ້າເຖິງສະດວກ, ທົ່ວເຖິງ, ທັນການ ແລະ ເຊື່ອມຕໍ່ລະບົບຖານຂໍ້ມູນຂ່າວສານ ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງສະໜອງຂໍ້ມູນ ທີ່ຕິດພັນກັບນະໂຍບາຍ, ລະບຽບນິຕິກຳ, ການຜະລິດ, ການຕະຫຼາດ, ການບໍລິການ ແລະ ຂໍ້ມູນອື່ນ ຕາມພາລະບົດບາດຂອງຕົນ ໃຫ້ແກ່ຜູ້ປະກອບກິດຈະການໂອດອບ ດ້ວຍການຈັດກອງປະຊຸມເຜີຍແຜ່, ເຜີຍແຜ່ໃນຮູບແບບເອເລັກໂຕຣນິກ, ປື້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ ແລະ ສື່ມວນຊົນອື່ນ.

### ມາດຕາ 34 ການສົ່ງເສີມການປະດິດ ແລະ ນຳໃຊ້ນະວັດຕະກຳ

ລັດ ສົ່ງເສີມ ໂອດອບ ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ ຜູ້ປະກອບກິດຈະການໂອດອບ ຄົ້ນຄວ້າ, ປະດິດ ແລະ ນຳໃຊ້ນະວັດຕະກຳໃໝ່ ເຂົ້າໃນການດຳເນີນການຜະລິດ, ການອອກແບບຫຸ້ມຫໍ່, ການຕະຫຼາດ, ການບໍລິການ ແລະ ອື່ນໆ ເພື່ອຂະຫຍາຍ ແລະ ພັດທະນາກິດຈະການຂອງຕົນ;

2. ຊຸກຍູ້, ສົ່ງເສີມ ແລະ ສະໜອງທຶນໃຫ້ສະຖາບັນຄົ້ນຄວ້າ, ສະຖາບັນການສຶກສາ ແລະ ພາກທຸລະກິດ ຄົ້ນຄວ້າ ແລະ ປະດິດນະວັດຕະກຳໃໝ່ ເພື່ອຖ່າຍທອດໃຫ້ຜູ້ປະກອບກິດຈະການໂອດອບ ນຳໃຊ້ເຂົ້າໃນການດຳເນີນການຜະລິດສິນຄ້າ, ການອອກແບບການຫຸ້ມຫໍ່, ການຕະຫຼາດ, ການບໍລິການ ແລະ ອື່ນໆ ໃຫ້ມີຜະລິດຕະພາບ ແລະ ຄຸນນະພາບສູງຂຶ້ນ.

## ໝວດທີ 6
## ຄະນະກຳມະການສົ່ງເສີມໂອດອບ

### ມາດຕາ 35 ຄະນະກຳມະການສົ່ງເສີມໂອດອບ

ຄະນະກຳມະການສົ່ງເສີມໂອດອບ ແມ່ນ ການຈັດຕັ້ງໜຶ່ງທີ່ບໍ່ປະຈຳການ, ມີພາລະບົດບາດ ເປັນເສນາທິການໃນການຄົ້ນຄວ້າ ແລະ ປະສານງານກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານໂອດອບ.

ຄະນະກຳມະການສົ່ງເສີມໂອດອບປະກອບດ້ວຍ:

1. ຄະນະກຳມະການສົ່ງເສີມໂອດອບ ຂັ້ນສູນກາງ;
2. ຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ, ນະຄອນຫຼວງ;
3. ຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ, ນະຄອນ.

### ມາດຕາ 36 ຄະນະກຳມະການສົ່ງເສີມໂອດອບຂັ້ນສູນກາງ

ຄະນະກຳມະການສົ່ງເສີມໂອດອບຂັ້ນສູນກາງ ຂຽນຫຍໍ້ວ່າ **"ຄອສ"** ຖືກແຕ່ງຕັ້ງໂດຍລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ຕາມການສະເໜີຂອງກົມສົ່ງເສີມການຄ້າ ແລະ ຫັດຖະກຳ, ມີພາລະບົດບາດໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ ວຽກງານໂອດອບ ໂດຍກົມສົ່ງເສີມການຄ້າ ແລະ ຫັດຖະກຳເປັນກອງເລຂາ.

ຄະນະກຳມະການສົ່ງເສີມໂອດອບຂັ້ນສູນກາງ ປະກອບດ້ວຍ:

1. ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຊີ້ນຳ
2. ຫົວໜ້າກົມສົ່ງເສີມການຄ້າ ແລະ ຫັດຖະກຳ ເປັນຫົວໜ້າຄະນະ
3. ຮອງຫົວໜ້າກົມສົ່ງເສີມການຄ້າ ແລະ ຫັດຖະກຳ ເປັນຮອງຫົວໜ້າຄະນະ, ທັງເປັນຫົວໜ້າກອງເລຂາ
4. ຮອງຫົວໜ້າກົມຂະແໜງການທີ່ກ່ຽວຂ້ອງ ເປັນຄະນະ
5. ວິຊາການຂະແໜງການທີ່ກ່ຽວຂອງ ເປັນຄະນະ.

### ມາດຕາ 37 ຄະນະກຳມະການສົ່ງເສີມໂອດອບຂັ້ນແຂວງ

ຄະນະກຳມະການສົ່ງເສີມໂອດອບຂັ້ນແຂວງ ຂຽນຫຍໍ້ວ່າ **"ຄອຂ"** ຖືກແຕ່ງຕັ້ງໂດຍ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ, ມີພາລະບົດບາດໃນການນຳພາຈັດຕັ້ງປະຕິບັດ ວຽກງານສົ່ງເສີມໂອດອບ ໂດຍຂະແໜງສົ່ງເສີມການຄ້າ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ເປັນກອງເລຂາ.

ຄະນະກຳມະການສົ່ງເສີມໂອດອບຂັ້ນແຂວງ ປະກອບດ້ວຍ:

1. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ເປັນຜູ້ຊີ້ນຳ

2. ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນຫົວໜ້າຄະນະ
3. ຮອງຫົວໜ້າພະແນກການຂັ້ນແຂວງ ທີ່ກ່ຽວຂ້ອງ ເປັນຮອງຫົວໜ້າຄະນະ
4. ຫົວໜ້າຂະແໜງສົ່ງເສີມການຄ້າ ແລະ ຫັດຖະກຳ ເປັນຄະນະ, ທັງເປັນຫົວໜ້າກອງເລຂາ
5. ວິຊາການພະແນກການຂັ້ນແຂວງທີ່ກ່ຽວຂອງ ເປັນຄະນະ

**ມາດຕາ 38 ຄະນະກຳມະການສົ່ງເສີມໂອດອບຂັ້ນເມືອງ**

ຄະນະກຳມະການສົ່ງເສີມໂອດອບຂັ້ນເມືອງ ຂຽນຫຍໍ້ວ່າ **"ຄອມ"** ຖືກແຕ່ງຕັ້ງໂດຍ ເຈົ້າເມືອງ, ເຈົ້ານະຄອນ ຕາມການສະເໜີຂອງຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ, ມີພາລະບົດບາດໃນການນຳພາຈັດຕັ້ງປະຕິບັດ ວຽກງານສົ່ງເສີມໂອດອບ ໂດຍໜ່ວຍງານສົ່ງເສີມການຄ້າ ແລະ ຫັດຖະກຳ, ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ເປັນກອງເລຂາ.

ຄະນະກຳມະການສົ່ງເສີມໂອດອບຂັ້ນເມືອງ ປະກອບດ້ວຍ:

1. ຮອງເຈົ້າເມືອງ, ນະຄອນ ເປັນຫົວໜ້າຄະນະ
2. ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ/ນະຄອນ ເປັນຮອງຫົວໜ້າຄະນະ
3. ຮອງຫົວໜ້າຫ້ອງການ ຂັ້ນເມືອງ ທີ່ກ່ຽວຂ້ອງ ເປັນຄະນະ
4. ຫົວໜ້າໜ່ວຍງານສົ່ງເສີມການຄ້າ ແລະ ຫັດຖະກຳ ເປັນຄະນະ, ທັງເປັນຫົວໜ້າກອງເລຂາ;
5. ວິຊາການພະແນກການຂັ້ນແຂວງທີ່ກ່ຽວຂອງ ເປັນຄະນະ.

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມໂອດອບ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ**

ຄະນະກຳມະການສົ່ງເສີມໂອດອບຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນເຈົ້າການຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານໂອດອບ ເພື່ອລາຍງານຂັ້ນເທິງ ໃຫ້ທິດຊີ້ນຳ, ແກ້ໄຂຕາມແຕ່ລະກໍລະນີ;
2. ຄົ້ນຄ້ວາ, ພິຈາລະນາ, ໃຫ້ທິດຊີ້ນຳໃນການສ້າງ ແລະ ຮັບຮອງແຜນວຽກ, ແຜນງານ ແລະ ແຜນໂຄງການ ໂອດອບ;
3. ຄົ້ນຄວ້າ, ພິຈາລະນາຄັດເລືອກ ແລະ ອອກໃບຢັ້ງຢືນຮັບຮອງຜະລິດຕະພັນສິນຄ້າ ເພື່ອສະເໜີຂໍໃບອະນຸຍາດນຳໃຊ້ກາໝາຍໂອດອບ;
4. ຄົ້ນຄວ້າ, ພິຈາລະນາຄັດເລືອກ ຜະລິດຕະພັນສິນຄ້າໂອດອບ ເພື່ອສະເໜີປະດັບດາວນາມມະຍົດ 1 ດາວ ຫາ 5 ດາວ ຕາມການແບ່ງຂັ້ນຄຸ້ມຄອງ;
5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນຂັ້ນສູນກາງ ແລະ ອົງການປົກຄອງທ່ອງຖິ່ນ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດວຽກງານໂອດອບ ຕາມຄວາມຮັບຜິດຊອບພາຍໃນຂະແໜງການຂອງຕົນ;
6. ສະຫຼຸບລາຍງານຂັ້ນເທິງເປັນແຕ່ລະໄລຍະ;
7. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 40 ສິດ ແລະ ໜ້າທີ່ ຂອງກອງເລຂາຄະນະກຳມະການສົ່ງເສີມໂອດອບຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ**

ກອງເລຂາຄະນະກຳມະການສົ່ງເສີມໂອດອບຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ບັນດາລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ວຽກງານໂອດອບ;
2. ສັງລວມ ແລະ ສະເໜີແຜນການ, ແຜນງານ ແລະ ໂຄງການ ໂອດອບ ຕໍ່ ຄະນະກຳມະການສົ່ງເສີມໂອດອບຂັ້ນຂອງຕົນ ເພື່ອພິຈາລະນາຮັບຮອງ;
3. ຊຸກຍູ້, ຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານໂອດອບ;
4. ເປັນໃຈກາງປະສານສົມທົບກັບ ບັນດາຂະແໜງການ, ພາກສ່ວນຕ່າງໆ ກ່ຽວກັບ ວຽກງານໂອດອບ;
5. ກະກຽມກອງປະຊຸມ ຄະນະກຳມະການສົ່ງເສີມໂອດອບຂັ້ນຂອງຕົນ;
6. ເປັນເຈົ້າການປະສານງານ, ກະກຽມກອງປະຊຸມຄະນະກຳມະການ ເພື່ອປະເມີນຄັດເລືອກຜະລິດຕະພັນສິນຄ້າ ເປັນສິນຄ້າໂອດອບ ແລະ ການປະດັບດາວນາມມະຍົດໃຫ້ສິນຄ້າໂອດອບຕາມລະບຽບການ;
7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານໂອດອບ ຕໍ່ຄະນະກຳມະການສົ່ງເສີມໂອດອບຂັ້ນຂອງຕົນ ຢ່າງເປັນປົກກະຕິ;
8. ເກັບກຳ, ສັງລວມ ແລະ ຮັກສາຂໍ້ມູນ ກ່ຽວກັບ ວຽກງານໂອດອບ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 7
## ກອງທຶນສົ່ງເສີມໂອດອບ

**ມາດຕາ 41 ກອງທຶນສົ່ງເສີມໂອດອບ**

ກອງທຶນສົ່ງເສີມໂອດອບ ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອສະສົມທຶນ ແລະ ລະດົມທຶນຈາກແຫຼ່ງທຶນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ແນ່ໃສ່ສະສົມທຶນໃຫ້ພຽງພໍ ໃນການຕອບສະໜອງເຂົ້າໃນການສົ່ງເສີມໂອດອບໃຫ້ມີປະສິດທິພາບ, ປະສິດທິຜົນ ໂດຍຢູ່ພາຍໃຕ້ການຄຸ້ມຄອງ ແລະ ຕິດຕາມ ກວດກາຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ກອງທຶນສົ່ງເສີມໂອດອບ ຂຽນຫຍໍ້ວ່າ: “ກສອ”.

**ມາດຕາ 42 ແຫຼ່ງທຶນຂອງກອງທຶນສົ່ງເສີມໂອດອບ**

ກອງທຶນສົ່ງເສີມໂອດອບ ໄດ້ມາຈາກແຫຼ່ງທຶນ ດັ່ງນີ້:

1. ການປະກອບທຶນຂອງລັດ;
2. ການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກພາຍໃນ ຫຼື ຕ່າງປະເທດ;
3. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍຄວາມສະໝັກໃຈ;
4. ແຫຼ່ງທຶນອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 43 ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນສົ່ງເສີມໂອດອບ**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນສົ່ງເສີມໂອດອບ ຕ້ອງຕິດພັນກັບວຽກງານໂອດອບ, ຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ.

ສຳລັບລາຍລະອຽດ ກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ກອງທຶນສົ່ງເສີມໂອດອບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 8
## ຂໍ້ຫ້າມ

### ມາດຕາ 44 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ ແລະ ບໍ່ໃຫ້ຄວາມຮ່ວມມື ໃນວຽກງານໂອດອບ;
2. ປອມແປງ, ບິດເບືອນຂໍ້ມູນຂອງຕົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ເພື່ອຜົນປະໂຫຍດຂອງຕົນເອງ ຊຶ່ງສ້າງຄວາມເສຍຫາຍແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
3. ເປັນສື່ກາງໃນການໃຫ້, ຮັບສິນບົນ ຫຼື ຜົນປະໂຫຍດອື່ນ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 45 ຂໍ້ຫ້າມສຳລັບຜູ້ປະກອບການ

ຫ້າມ ຜູ້ປະກອບການ ມີພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະການໂດຍບໍ່ຖືກຕ້ອງຕາມກົດໝາຍ;
2. ນຳໃຊ້ກາໝາຍໂອດອບ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມຈິງ ຕໍ່ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນແກ່ພະນັກງານ-ລັດຖະກອນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
5. ໂອນ ຫຼື ໃຫ້ຜູ້ອື່ນນຳໃຊ້ກາໝາຍໂອດອບຂອງຕົນ;
6. ໂຄສະນາ, ຕົວະຍົວະ ຫຼອກລວງ ຫຼື ສະໜອງຂໍ້ມູນ ກ່ຽວກັບ ໂອດອບ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 46 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ

ຫ້າມ ພະນັກງານ-ລັດຖະກອນຂອງອົງການຄຸ້ມຄອງການຈັດຫາງານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
2. ອອກອອກກາໝາຍໂອດອບ ທີ່ບໍ່ຖືກຕ້ອງກັບກົດໝາຍ ແລະ ລະບຽບການ;
3. ສະໜອງຂໍ້ມູນກ່ຽວກັບໂອດອບໂດຍບໍ່ຖືກຕ້ອງຕາມກົດໝາຍ;
4. ປອມແປງເອກະສານ ແລະ ນຳໃຊ້ເອກະສານປອມ;
5. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຂາດຈັນຍາບັນ;
6. ຂໍເອົາ, ຮຽກເອົາ, ທວງເອົາ ຫຼື ຮັບເອົາສິນບົນ;
7. ຮຽກ ຫຼື ເກັບ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບ ທີ່ບໍ່ຖືກຕ້ອງຕາມລະບຽບການ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 9
## ການຄຸ້ມຄອງ ແລະ ກວດກາ ວຽກງານໂອດອບ

### ມາດຕາ 47 ອົງການຄຸ້ມຄອງ ແລະ ກວດກາວຽກງານໂອດອບ

ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານໂອດອບ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານໂອດອບ ປະກອບດ້ວຍ:

1. ກະຊວງອຸດສາຫະກຳ ແລະ ການຄ້າ;
2. ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ/ນະຄອນຫຼວງ;
3. ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ/ນະຄອນ.

### ມາດຕາ 48 ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ

ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ ແລະ ລະບຽບການ ກ່ຽວກັບ ວຽກງານໂອດອບ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບການ ກ່ຽວກັບ ວຽກງານໂອດອບ ເປັນແຜນການ, ແຜນງານ, ໂຄງການ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ ແລະ ລະບຽບການ ກ່ຽວກັບ ໂອດອບ ໃນຂອບເຂດທົ່ວປະເທດ;
4. ຊີ້ນຳ, ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ໂອດອບ;
5. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບ ວຽກງານໂອດອບ;
6. ພິຈາລະຈາ ອອກໃບອະນຸຍາດນຳໃຊ້ກາໝາຍໂອດອບ;
7. ພິຈາລະນາ ອອກໃບຢັ້ງຢືນດາວນາມມະຍົດ 4 ດາວ ແລະ 5 ດາວ ໃຫ້ສິນຄ້າໂອດອບ;
8. ຄຸ້ມຄອງກອງທຶນສົ່ງເສີມໂອດອບ;
9. ບຳລຸງສ້າງ, ຍົກລະດັບຄວາມຮູ້ ຄວາມສາມາດ ແລະ ຄຸນທາດການເມືອງ ໃຫ້ບຸກຄະລາກອນ;
10. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານໂອດອບ;
11. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ແລະ ສົ່ງເສີມວຽກງານໂອດອບ;
12. ພົວພັນຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບ ວຽກງານໂອດອບ;
13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານໂອດອບ ຕໍ່ ລັດຖະບານ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ**

ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ ແລະ ລະບຽບການ ກ່ຽວກັບ ວຽກງານໂອດອບ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ລະບຽບການ ກ່ຽວກັບ ວຽກງານໂອດອບ;
3. ຊີ້ນຳ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ກ່ຽວກັບ ວຽກງານໂອດອບ;
4. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບ ວຽກງານໂອດອບ ຢູ່ພາຍໃນແຂວງ, ນະຄອນຫຼວງ ຂອງຕົນ;
5. ພິຈາລະນາ ອອກໃບຢັ້ງຢືນດາວນາມມະຍົດ ໂອດອບ 2 ດາວ ແລະ 3 ດາວ;
6. ສະເໜີ ສ້າງ, ຍົກລະດັບຄວາມຮູ້ ຄວາມສາມາດ ແລະ ຄຸນທາດການເມືອງ ໃຫ້ບຸກຄະລາກອນ;
7. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານໂອດອບ;
8. ປະສານສົມທົບພະແນກການ, ອົງການ, ອົງການປົກຄອງຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ແລະ ສົ່ງເສີມວຽກງານໂອດອບ;
9. ພົວພັນຮ່ວມມື ກັບ ຕ່າງປະເທດ ກ່ຽວກັບ ວຽກງານໂອດອບ ຕາມການມອບໝາຍ;
10. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານໂອດອບ ຕໍ່ ອົງການປົກຄອງຂັ້ນແຂວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ**

ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ ແລະ ລະບຽບການ ກ່ຽວກັບ ວຽກງານໂອດອບ;
2. ເຜີຍແຜ່ ນະໂຍບາຍ, ລະບຽບການ ກ່ຽວກັບ ວຽກງານໂອດອບ;
3. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ກ່ຽວກັບ ວຽກງານໂອດອບ;
4. ພິຈາລະນາ ອອກໃບຢັ້ງຢືນດາວນາມມະຍົດ ໂອດອບ 1 ດາວ;
5. ສະເໜີ ສ້າງ, ຍົກລະດັບຄວາມຮູ້ ຄວາມສາມາດ ແລະ ຄຸນທາດການເມືອງ ໃຫ້ບຸກຄະລາກອນ;
6. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານໂອດອບ;
7. ປະສານສົມທົບຫ້ອງການ, ອົງການ, ອົງການປົກຄອງຂັ້ນບ້ານ ແລະ ພາກສ່ວນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ແລະ ສົ່ງເສີມວຽກງານໂອດອບ;
8. ພົວພັນຮ່ວມມືກັບ ຕ່າງປະເທດ ກ່ຽວກັບ ວຽກງານໂອດອບ ຕາມການມອບໝາຍ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານໂອດອບ ຕໍ່ ອົງການປົກຄອງຂັ້ນເມືອງ ແລະ ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 51 ສິດ ແລະ ໜ້າທີ່ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ປະສານສົມທົບ ກັບ ຂະແໜງການອຸດສາຫະກຳ ແລະ ການຄ້າ ໃນການຊຸກຍູ້ສົ່ງເສີມ, ຄຸ້ມຄອງ ແລະ ກວດກາ ວຽກງານໂອດອບ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 52 ເນື້ອໃນການກວດກາ**

ການກວດກາ ວຽກງານໂອດອບ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນິຕິກຳ ກ່ຽວກັບ ວຽກງານໂອດອບ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ - ລັດຖະກອນ ແລະ ເຈົ້າໜ້າທີ່;
3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບ ວຽກງານໂອດອບ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 53 ຮູບການ ການກວດກາ**

ການກວດກາ ມີ 3 ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາຢ່າງແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍ ທີ່ຖືກກວດກາຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານໂອດອບ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ .

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 54 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ.**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດວຽກງານໂອດອບ ຖືກຕ້ອງ, ມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 55 ມາດຕະການຕໍ່ຜູ້ທີ່ລະເມີດ.**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 56 ການຈັດຕັ້ງປະຕິບັດ.**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 57 ຜົນສັກສິດ.**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ.........................................ເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**